ເອກະສານປາຖະກະຖາ
2 ວັນປະຫວັດສາດ ຂອງຊາດ, ຂອງພັກ

- **ຮຽນ:** ບັນດາສະຫາຍກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ, ຮອງຫົວໜ້າພະແນກການ, ນາຍທະຫານ, ນາຍຕຳຫຼວດ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງແຂວງ, ລັດວິສາຫະກິດອ້ອມຂ້າງແຂວງ ທີ່ຮັກແພງທັງຫຼາຍ.

ດັ່ງທີ່ ຄະນະຮັບຜິດຊອບໄດ້ສະເໜີຈຸດປະສົງຜ່ານໄປນັ້ນ ເພື່ອເປັນການທົບທວນຫວນຄືນບັນດາມູນເຊື້ອອັນຫວັດສາດສຳຄັນ 2 ວັນດັ່ງກ່າວ ຕໍ່ໄປຂ້າພະເຈົ້າຂໍນຳພາບັນດາສະຫາຍເຂົ້າສູ່ເນື້ອໃນ ດັ່ງນີ້:

ເອກະສານທີ 1
ວັນປະກາດເອກະລາດ ຄົບຮອບ 81 ປີ.

(12 ຕຸລາ 1945-12 ຕຸລາ 2026)

I. ບັນດາປັດໃຈສຳຄັນທີ່ສ້າງເງື່ອນໄຂໃຫ້ແກ່ການປະກາດເອກະລາດ 12 ຕຸລາ 1945.

ໃນທ້າຍສັດຕະວັດທີ XIX ພວກລ່າເມືອງຂຶ້ນຝຣັ່ງໄດ້ເຂົ້າມາຮຸກຮານ ແລະ ຢຶດຄອງເອົາປະເທດເຮົາເປັນຫົວເມືອງຂຶ້ນ. ປະເທດລາວໄດ້ສູນເສຍເອກະລາດ ປະຊາຊົນລາວໄດ້ຂາດອິດສະລະພາບ ກາຍເປັນຂ້ອຍຂ້າຂອງຕ່າງຊາດ, ດ້ວຍມູນເຊື້ອບໍ່ຍອມຈຳນົນ, ປະຊາຊົນລາວບັນດາເຜົ່າ ໄດ້ລຸກຮື້ຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງເນື່ອງນິດລຽນຕິດ ແລະ ເປີດກວ້າງອອກໄປທົ່ວທຸກແຫ່ງຫົນໃນຂອບເຂດທົ່ວປະເທດ.

ເຖິງວ່າການຕໍ່ສູ້ໃນໄລຍະນັ້ນບໍ່ໄດ້ມີພັກນຳພາ, ຂາດອາວຸດຍຸດໂທປະກອນອັນຈຳເປັນ ແລະ ໄດ້ຖືກປາບປາມຢ່າງຮ້າຍແຮງ-ປ່າເຖື່ອນກໍ່ຕາມ, ແຕ່ກໍ່ໄດ້ເຮັດໃຫ້ພວກລ່າເມືອງຂຶ້ນຕ້ອງສະທ້ານຢ້ານກົວ ແລະ ສູນເສຍເປັນຈຳນວນບໍ່ໜ້ອຍ; ອັນສຳຄັນທີ່ສຸດ ແມ່ນໄດ້ສະແດງໃຫ້ພວກເຂົາເຫັນວ່າຄົນລາວມີນ້ຳໃຈຮັກຊາດອັນສູງສົ່ງ ແລະ **"ຍອມຕາຍດີກວ່າເປັນຂ້ອຍຂ້າ ຂອງຊາດອື່ນ"**.

ປີ 1930 ພັກກອມມູນິດອິນດູຈີນ ໄດ້ກຳເນີດເກີດຂຶ້ນ, ເຮັດໃຫ້ການຕໍ່ສູ້ ຂອງປະຊາຊົນບັນດາປະເທດໃນອິນດູຈີນ ມີແນວທາງ ແລະ ມີຍຸດທະສາດອັນຈະແຈ້ງ, ການຕໍ່ສູ້ ຂອງປະຊາຊົນລາວບັນດາເຜົ່າ ໄດ້ກ້າວເຂົ້າສູ່ໄລຍະໃໝ່, ດ້ວຍຄຸນນະພາບອັນໃໝ່ພາຍໃຕ້ການນຳພາ-ຊີ້ນຳ ຂອງອົງຄະນະພັກແຄ້ວນລາວ, ບັນດານັກຮົບກອມມູນິດລຸ້ນທຳອິດ ຂອງລາວເຮົາ ໄດ້ເອົາຕົວເຈືອຈານເຂົ້າກັບປະຊາຊົນບັນດາເຜົ່າຢູ່ຮາກຖານ ແລະ ໄດ້ດຳເນີນການໂຄສະນາຊົນຂວາຍ ແລະ ຈັດຕັ້ງຮາກຖານປະຕິວັດຂຶ້ນ ແບບປິດລັບ ຢູ່ຫຼາຍບ່ອນເປັນຕົ້ນ ຢູ່ບໍ່ແຮ່, ໂຮງຈັກໂຮງງານ, ໂຮງຮຽນ, ຕົວເມືອງ, ຊົນນະບົດ, ຄ້າຍທະຫານ; ໄດ້ຕົ້ໂຮມ ແລະ ຈັດຕັ້ງນຳພາປະຊາຊົນ, ບັນດາຊັ້ນຄົນລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງພິລະອາດຫານ, ເນື່ອງນິດລຽນຕິດ ແລະ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວກວ້າງອອກໄປໃນທົ່ວປະເທດ. ໃນຂະນະດຽວ

ກັນການຈັດຕັ້ງນຳພາ-ຊີ້ນຳ ກໍມີລັກສະນະລວມສູນເປັນເອກະພາບ ມີຍຸດທະວິທີທີ່ຄ່ອງແຄ້ວ, ມີຍຸດທະສາດອັນຈະແຈ້ງ ແລະ ມີແກນນຳທີ່ສະຫຼຽວສະຫຼາດເຂັ້ມແຂງ.

ເມື່ອກາລະໂອກາດໄດ້ມາເຖິງ, ເປັນຕົ້ນແມ່ນ ໃນປີ 1945 ພາຍຫຼັງກອງທັບແດງໂຊວຽດ ໄດ້ຜາບແພ້ພວກຟາດຊິດເຢຍລະມັນ ໃນສົງຄາມໂລກ ຄັ້ງທີ II, ສ່ວນຢູ່ຫວຽດນາມ ການປະຕິວັດ ເດືອນສິງຫາໄດ້ຮັບໄຊຊະນະ ແລະ ໄດ້ສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຂຶ້ນ. ພັກໄດ້ເດັດດ່ຽວນຳພາປະຊາຊົນເຮົາ ລຸກຂຶ້ນຢຶດອຳນາດການປົກຄອງໃນທົ່ວປະເທດ ຈາກກຳມືຂອງພວກຊຸນເສິກຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝຣັ່ງ; ຂະບວນການຢຶດອຳນາດ ຢູ່ວຽງຈັນ ໄດ້ເລີ່ມຈາກຂະບວນການຕໍ່ສູ້ ຂອງກຳມະກອນ ແລະ ຕໍ່ມາ ໃນວັນທີ 23 ສິງຫາ 1945 ຈຶ່ງມີການໂຮມຊຸມນຸມໃຫຍ່ ທີ່ມີຄົນເຂົ້າຮ່ວມໝື່ນກວ່າຄົນ ໂດຍມີຕົວແທນ ຂອງກຳລັງປະຕິວັດເປັນແກ່ນສານນຳພາ ແລະ ປຸກລະດົມມວນຊົນ ສາມັກຄີກັນເດັດດ່ຽວຕໍ່ສູ້ກູ້ເອົາເອກະລາດ ແລະ ອິດສະລະພາບອັນແທ້ຈິງມາໃຫ້ປະເທດຊາດ.

ຈາກເຫດການດັ່ງກ່າວນັ້ນ, ຂະບວນການຢຶດອຳນາດໄດ້ແຜ່ລາມໄປຫຼາຍແຂວງ ເຖິງຕົ້ນເດືອນຕຸລາ ຊຶ່ງໄດ້ສ້າງເງື່ອນໄຂໃຫ້ແກ່ການລຸກຮື້ຂຶ້ນຢຶດອຳນາດຈາກພວກລ່າເມືອງຂຶ້ນ ແລະ ປະກາດຄວາມເປັນເອກະລາດແຫ່ງຊາດ ໃນວັນທີ 12 ຕຸລາ 1945.

II. ຄວາມໝາຍສຳຄັນ ວັນປະກາດເອກະລາດ 12 ຕຸລາ 1945

- ວັນທີ 12 ຕຸລາ 1945 ແມ່ນເຫດການທີ່ມີຄວາມໝາຍປະຫວັດສາດ ຂອງຊາດລາວເຮົາ ຍ້ອນວ່າ ແມ່ນມື້ທີ່ມີການໂຮມຊຸມນຸມໃຫຍ່ ທີ່ສະໜາມກິລາແຫ່ງຊາດ ຊຶ່ງມີມວນຊົນເຂົ້າຮ່ວມ 2 ໝື່ນກ່ວາຄົນ ໂດຍແມ່ນລັດຖະບານລາວອິດສະຫຼະ ໄດ້ເປັນຕົວແທນໃຫ້ແກ່ວົງຄະນະຍາດແຫ່ງຊາດ ປະກາດຄວາມເປັນເອກະລາດ ຂອງປະເທດລາວ ຕໍ່ໂລກຢ່າງເປັນທາງການ, ປະກາດໂຮມແຜ່ນດິນລາວເປັນເອກະພາບ; ພ້ອມກັນນັ້ນ ກໍໄດ້ອອກຖະແຫຼງການ ກ່ຽວກັບການປ່ຽນແປງການປົກຄອງ, ລົບລ້າງທຸກໆສັນຍາທີ່ລາວໄດ້ເຊັນກັບຝຣັ່ງ, ປະກາດໃຊ້ລັດຖະທຳມະນູນສະບັບທຳອິດ, ປະກາດໃຊ້ທຸງຊາດ (ທຸງຊາດລາວປັດຈຸບັນ) ປະກາດແຕ່ງຕັ້ງຄະນະລັດຖະບານຊົ່ວຄາວ ຊຶ່ງມີ ສະເດັດ ເຈົ້າສຸພານຸວົງ ເປັນລັດຖະມົນຕີ ວ່າການກະຊວງການຕ່າງປະເທດ ແລະ ຕໍ່ມາໄດ້ດຳລົງຕຳແໜ່ງເປັນຜູ້ບັນຊາການທະຫານສູງສຸດອີກດ້ວຍ.

- ເຮັດໃຫ້ຊາວໂລກຮັບຮູ້ ກ່ຽວກັບຄວາມເປັນຊາດລາວ ຂອງພວກເຮົາ, ຮັບຮູ້ອະທິປະໄຕ ແລະ ເຂດນ້ຳແດນດິນ ຂອງລາວ; ພ້ອມກັນນັ້ນ ກໍຮັບຮູ້ລັດຖະບານຊົ່ວຄາວ ຂອງລາວ ແລະ ຮັບຮູ້ວ່າຊາດລາວ-ຄົນລາວກໍເປັນຄົນທີ່ມີກຽດສັກສີເໝືອນຄົນຊາດອື່ນໆ ແລະ ຢາກມີອິດສະລະພາບ, ເປັນເຈົ້າຊາຕາກຳ ຂອງຕົນເອງ ແລະ ຢາກມີການພັດທະນາຕົນ ເພື່ອຄວາມຢູ່ດີກິນດີ ແລະ ຄວາມຈະເລີນວັດທະນາ. ຍ້ອນແນວນັ້ນ ພວກເຮົາຈຶ່ງຖືເອົາວັນປະກາດເອກະລາດ 12 ຕຸລາ 1945 ເປັນວັນປະຫວັດສາດທີ່ສຳຄັນ ຂອງຊາດ, ເປັນວັນແຫ່ງຄວາມເອກອ້າງທະນົງໃຈ ຕໍ່ຄວາມອາດຫານຊານໄຊໃນການຕໍ່ສູ້ບົ່ມຈິດໃຈ **"ຍອມຕາຍດີ ກວ່າເປັນຂ້ອຍຂ້າ; ຕາຍເພື່ອເອກະລາດ ດີກວ່າຢູ່ພາຍໃຕ້ແອກປົກຄອງຂອງຕ່າງຊາດ"**;

- ແມ່ນໝາກຜົນແຫ່ງການຕໍ່ສູ້ມີໄຊ ຂອງຄົນລາວຜູ້ຮັກຊາດພາຍໃຕ້ການນຳພາ ຂອງພັກ, ສາ ມາດປົດປ່ອຍຊາດປະເທດຊາດອອກຈາກກຳມື ຂອງພວກຈັກກະພັດຕ່າງດ້າວໄດ້ຢ່າງສົມບູນ ແລະ ໄດ້ ສະຖາປະນາ ເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975.

III. ເສີມຂະຫຍາຍມູນເຊື້ອ ວັນປະກາດເອກະລາດ 12 ຕຸລາ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ

❶ ເດັດດ່ຽວຢຶດໝັ້ນໃນເສັ້ນທາງ ແລະ ຈຸດໝາຍ ຂອງການປະຕິວັດນັ້ນ ຄື: ຈຸດໝາຍສັງຄົມ ນິຍົມ, ປະຕິບັດສອງໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມັ່ງຄັ່ງ ເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

❷ ເພີ່ມທະວີການໂຄສະນາສຶກສາອົບຮົມພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາ ຊັ້ນຄົນຕ່າງໆ ໂດຍສະເພາະ ຄົນຮຸ່ນໜຸ່ມໃຫ້ຮັບຮູ້ເຂົ້າໃຈ ກ່ຽວກັບຄວາມເປັນມາ ແລະ ຄວາມໝາຍສຳ ຄັນ ຂອງວັນປະກາດເອກະລາດ 12 ຕຸລາ ດ້ວຍຮູບການຕ່າງໆ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ.

❸ ຕັ້ງໜ້າປຸກລະດົມຂະບວນການເຄື່ອນໄຫວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ໃຫ້ປະກົດຜົນເປັນຈິງ, ໃນນັ້ນ ສືບຕໍ່ຈັດຕັ້ງຜັນຂະຫຍາຍ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030 ໃຫ້ມີປະສິດທິຜົນສູງ.

❹ ເພີ່ມທະວີຄວາມສັກສິດແຫ່ງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ຕາມທິດພັກນຳພາ, ລັດ ຄຸ້ມຄອງດ້ວຍກົດໝາຍ ແລະ ປະຊາຊົນເປັນເຈົ້າເຂົ້າຮ່ວມ.

❺ ເພີ່ມທະວີຄວາມສາມັກຄີປອງດອງ ຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາ ຂອງພັກ, ເອົາໃຈໃສ່ຈຳກັດແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ສ້າງບັນຍາກາດສັດໃສ, ເຮັດໃຫ້ ປະເທດຊາດມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

❻ ຕັ້ງໜ້າບູລະນະລະບອບປະຊາທິ ປະໄຕປະຊາຊົນ ໃຫ້ໜັກແໜ້ນ ຕາມທິດສ້າງລັດ ຂອງ ປະຊາ ຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດ ຂອງປະຊາຊົນຢ່າງແທ້ຈິງ, ສ້າງລັດເຮົາໃຫ້ເປັນ ລັດແຫ່ງກົດ ໝາຍເທື່ອລະກ້າວພາຍໃຕ້ການນຳພາຂອງພັກ.

❼ ຕັ້ງໜ້າປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ, ປົກປ້ອງເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງຊາດໄວ້ໃຫ້ໝັ້ນຄົງ, ມີສະຕິຕໍ່ ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງພວກຄົນບໍ່ດີທີ່ຫວັງມ້າງເພທຳລາຍລະບອບ ຂອງພວກເຮົາ. ເອົາ ໃຈໃສ່ຊຸກຍູ້ການຫັນລົງຮາກຖານເຊີດຊູຄວາມຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່ພັດທະນາຊົນນະ ບົດ, ສ້າງບ້ານພັດທະນາຕາມ **4** ເນື້ອໃນ **4** ຄາດໝາຍ, ຍູ້ຂະບວນການຜະລິດເປັນສິນຄ້າ, ສຸມໃສ່ແກ້ ໄຂຄວາມທຸກຍາກ ຂອງປະຊາຊົນໃຫ້ປະກົດຜົນເປັນຈິງ.

❽ ຈັດຕັ້ງປະຕິບັດແນວທາງການຕ່າງປະເທດ ທີ່ສ້າງສັນເຊື່ອມໂຍງເຂົ້າກັບສາກົນຢ່າງຕັ້ງໜ້າ ແລະ ເປັນເຈົ້າການ, ປະຕິບັດນະໂຍບາຍພົວພັນແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ບົນ ພື້ນຖານເຄົາລົບເອກະລາດ ອະທິປະໄຕ ແລະ ຜົນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າວຽກງານພາຍ ໃນ ຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ໂດຍສະເພາະ ກັບບັນດາ ປະເທດເພື່ອນມິດຍຸດທະສາດ, ຄວາມສາມັກຄີພິເສດ ລາວ-ຫວຽດນາມ, ບັນດາປະເທດໃກ້ຄຽງ ກໍຄື ບັນດາປະເທດໃນປະຊາຄົມອາຊຽນ, ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດໃນໂລກ.

ເອກະສານທີ 2

ວັນສ້າງຕັ້ງການທູດລາວ ຄົບຮອບ 81 ປີ (12 ຕຸລາ 1945-12 ຕຸລາ 2026).

I. ປະຫວັດການສ້າງຕັ້ງການທູດລາວ

1. ກ່ອນການສ້າງຕັ້ງພັກ ແລະ ການກຳເນີດວັນການທູດລາວ.

ປະຫວັດສາດການທູດລາວ ມີຕົ້ນກຳເນີດມາແຕ່ດຶກດຳບັນ ແລະ ຕິດພັນກັບການຂະຫຍາຍ ຕົວຂອງປະຫວັດ ສາດຂອງຊາດລາວໃນແຕ່ລະໄລຍະ. ເຖິງຈະບໍ່ມີນະໂຍບາຍການຕ່າງປະເທດຂອງຕົນ ເອງ ເປັນພື້ນຖານໃຫ້ແກ່ການດຳເນີນການທູດ, ແຕ່ການທູດໃນສະໄໝບູຮານຂອງລາວ ແມ່ນເກີດມາ ຈາກຂະບວນການຕໍ່ສູ້ ເພື່ອຜົນປະໂຫຍດຂອງຊາດເປັນຫຼັກ ເຊິ່ງຈະເຫັນໄດ້ວ່າ ບັນພະບຸລຸດຂອງລາວ ໄດ້ຕໍ່ສູ້ເພື່ອປົກປັກຮັກສາຄວາມເປັນເອກະລາດຂອງລາວ ຈົນເຖິງປັດຈຸບັນ.

ພາຍຫຼັງ ພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງໄດ້ເຮັດໃຫ້ ສາມຊາດອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ ໄດ້ສຳພັນກັນເຂົ້າເປັນກ້ອນກຳລັງສາມັກຄີ ເພື່ອຕໍ່ສູ້ກັບພວກລ່າ ເມືອງຂຶ້ນຝຣັ່ງ ຕາມແນວທາງການເມືອງແຫ່ງລັດທິມາກ-ເລນິນ. ໃນໄລນະນີ້ “ການທູດລາວ” ຈຶ່ງໄດ້ ຄ່ອຍໆຂະຫຍາຍຕົວ ພ້ອມກັບບັນດາຂະບວນການຕໍ່ສູ້ເພື່ອຄວາມເປັນເອກະລາດ ເຊິ່ງກາຍເປັນເຄື່ອງ ມືອັນສຳຄັນໃນການ ເຄື່ອນໄຫວຕໍ່ສູ້, ຂົນຂວາຍ ແລະ ຍາດແຍ່ງກາຍເປັນອົງປະກອບອັນໜຶ່ງ ເຮັດໃຫ້ ອົງຄະນະພັກແຄ້ວລາວ ສາມາດນຳພາປະຊາຊົນຍາດໄດ້ໄຊຊະນະ ແລະ ປະກາດເອກະລາດຕໍ່ຊາວ ໂລກ, ພ້ອມທັງໄດ້ສ້າງຕັ້ງຄະນະລັດຖະບານລາວເອກະລາດ, ໂດຍໄດ້ມີການຮ່າງລັດຖະທຳມະນູນຂອງ ຊາດລາວຂຶ້ນ.

ໃນແນວທາງການເມືອງ ລັດຖະບານຊຸດທຳອິດຂອງລາວ ບໍ່ທັນມີແນວທາງການຕ່າງປະເທດ ຢ່າງຈະແຈ້ງ, ແຕ່ຄະນະລັດຖະບານ ກໍໄດ້ມີການຕົກລົງສ້າງຕັ້ງກອງທະຫານປະສົມລາວ-ຫວຽດ ນາມ ເພື່ອຊ່ວຍກັນຕີຕ້ານກັບສັດຕູພາຍນອກ ໂດຍພາຍໃຕ້ການຊີ້ນຳ-ນຳພາ ຂອງລັດຖະມົນຕີກະຊວງການ ຕ່າງປະເທດລາວຜູ້ທຳອິດຄື ທ່ານ ສະເດັດ ເຈົ້າສຸພານຸວົງ. ເຫດການນີ້ ຖືເປັນເຫດການປະຫວັດສາດ

ອັນສຳຄັນ ຂອງປວງຊົນລາວ ແລະ ຜ່ານການຄົ້ນຄວ້າ ຈຶ່ງໄດ້ຖືເອົາວັນທີ 12 ຕຸລາ 1945 ເປັນວັນ ກຳເນີດ " ວັນການທູດລາວ " ຢ່າງເປັນທາງການ.

2. ການເຄື່ອນໄຫວ ພາຍໃຕ້ການນຳພາຂອງພັກ ກ່ອນປົດປ່ອຍ.

ໃນໄລຍະຕໍ່ຕ້ານການຄອບຄອງ ຄັ້ງທີ 2 ຂອງຝຣັ່ງ (ແຕ່ປີ 1945-1954) ຄະນະພັກແຄ້ວນລາວ ທີ່ນັບມື້ນັບຂະຫຍາຍຕົວຢ່າງເຂັ້ມແຂງ ກໍໄດ້ນຳພາປະຊາຊົນຕໍ່ສູ້ໃນໃນຫຼາຍຮູບແບບ, ໂດຍສະເພາະ ທາງດ້ານການທູດ ທີ່ບໍ່ພຽງແຕ່ເປັນເຄື່ອງມືໃນການຕໍ່ສູ້ດ້ານສັງຄົມ ເພື່ອສ້າງຄວາມສາມັກຄີປອງດອງ ພາຍໃນຊາດ, ຕໍ່ສູ້ກູ້ຊາດຕ້ານການຮຸກຮານແຊກແຊງຈາກພາຍນອກເທົ່ານັ້ນ, ແຕ່ຍັງເປັນເຄື່ອງມືຕໍ່ສູ້ໃນ ເວທີສາກົນ ເພື່ອສ້າງຄວາມເຂົ້າໃຈອັນຖືກຕ້ອງທັງພາຍໃນ ແລະ ສາກົນ ກ່ຽວກັບຂະບວນການຮັກ ຊາດ, ທຳລາຍການປິດລ້ອມ, ຂະຫຍາຍການພົວພັນກັບໂລກພາຍນອກ ແລະ ສະແຫວງຫາການສະ ໜັບສະໜູນຂອງເພື່ອນມິດສາກົນ. ຄຽງຄູ່ກັບດ້ານການທະຫານ ແລະ ດ້ານການເມືອງ, ການທູດລາວ ຍັງໄດ້ກາຍເປັນຍຸດໂທບາຍ ແລະ ຍຸດທະສາດອັນສຳຄັນໃນການຕໍ່ສູ້ ໂດຍຜ່ານການວາງນະໂຍບາຍການ ຕ່າງປະເທດ ທີ່ມີຄວາມແທດເໝາະກັບສະພາບການຂອງໂລກ ຈົນສາມາດຍາດໄດ້ຜົນສຳເລັດໃນຫຼາຍ ດ້ານ, ໄດ້ຮັບການຍອມຮັບຈາກສາກົນໃນທຸກຂັ້ນຕອນ, ໂດຍສະເພາະການບັງຄັບໃຫ້ຜູ້ຮຸກຮານຫັນໜ້າ ເຂົ້າສູ້ໂຕະເຈລະຈາ ແລະ ລົງນາມໃນສັນຍາເຊີແນວ ປີ 1954, ເຖິງວ່າ ໃນກອງປະຊຸມຄັ້ງນີ້ ຈະບໍ່ມີຜູ້ ແທນ ຂອງຄະນະລັດຖະບານລາວຕໍ່ຕ້ານ ເຂົ້າຮ່ວມ, ແຕ່ເນື່ອງຈາກການເຄື່ອນໄຫວທາງການທູດທີ່ ສະຫຼາດສ່ອງໃສ ສາມາດຍາດໄດ້ການສະໜັບສະໜູນຈາກປະເທດເພື່ອນມິດ ກໍຄື ຫວຽດນາມ, ຈີນ ແລະ ໂຊວຽດ, ກອງປະຊຸມ ຈຶ່ງເຫັນດີໃຫ້ຝຣັ່ງ ຖອນທະຫານອອກສາມປະເທດອິນດູຈີນ ແລະ ໃຫ້ການຮັບຮູ້, ປ່ຽນຖານະບໍ່ເອີ້ນວ່າ ຄະນະລັດຖະບານຕໍ່ຕ້ານ ເຊິ່ງຕໍ່ບັນຫາດັ່ງກ່າວ ຄະນະຜູ້ນຳແນວ ລາວອິດສະຫຼະ ໄດ້ຄົ້ນຄວ້າຢ່າງທັນການ ແລະ ຕົກລົງໃຫ້ໃສ່ຊື່ ຄະນະຝ່າຍປະເທດລາວ ເພື່ອໃຫ້ ສາກົນເຫັນໄດ້ວ່າ ຝ່າຍປະເທດລາວ ແມ່ນກຳລັງທາງການເມືອງທີ່ຖືກຕ້ອງຕາມກົດໝາຍ ແລະ ໄດ້ຖືກ ຮັບຮູ້ຈາກສາກົນ.

ໃນກອງປະຊຸມໃຫຍ່ ຂອງພັກປະຊາຊົນລາວ ຄັ້ງທີ I ໃນວັນທີ 22 ມີນາ 1955 ຢູ່ເຂດທີ່ ໝັ້ນຊໍາ ເໜືອ ໂດຍໄດ້ວາງນະໂຍບາຍພື້ນຖານ ແລະ ວາງໂຄງການດຳເນີນງານສະເພາະໜ້າ, ປະກອບມີ 12 ຂໍ້, ໃນນັ້ນ ຂໍ້ທີ 10 ໄດ້ກຳນົດແນວທາງການຕ່າງປະເທດຄື: **ຜູກມິດກັບທຸກປະເທດທີ່ເຄົາລົບ ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ, ປົນພື້ນຖານຫຼັກການສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ**. ໂດຍມີ ສະເດັດ ເຈົ້າສຸພານຸວົງ ເປັນຜູ້ນຳພາວຽກງານການຕ່າງປະ ເທດ. ນັບແຕ່ນັ້ນມາ, ປະເທດລາວໄດ້ຖືກຮັບຮູ້ນັບມື້ກວ້າງຂວາງ ແລະ ສາມາດສູ້ຊົນເຂົ້າເປັນສະມາຊິກ ອົງການສະຫະປະຊາຊາດ ໃນວັນທີ 14 ທັນວາ 1955.

ໃນໄລຍະປີ 1955-1972, ຖືໄດ້ວ່າເປັນໄລຍະທີ່ພັກນຳພາຕໍ່ສູ້ຢ່າງດຸເດືອດ, ທຸລະກັນດານ ທັງ ຕໍ່ສູ້ດ້ານການເມືອງພາຍໃນ ແລະ ການທະຫານ, ທັງສົມທົບການຕໍ່ສູ້ດ້ານການຕ່າງປະເທດ, ໃນນັ້ນ

ຄະນະຜູ້ນຳແນວລາວອິດສະຫຼະ ໄດ້ແລເຫັນເຖິງແນວທາງໃນການສ້າງສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ ອັນແທ້ຈິງ ຕ້ອງເລີ່ມຈາກພາຍໃນປະເທດກ່ອນ, ຈຶ່ງໄດ້ປ່ຽນຊື່ຈາກ "ແນວລາວອິດສະຫຼະ" ມາເປັນ "ແນວລາວຮັກຊາດ" ເພື່ອເປັນການຊຸກຍູ້ວຽກງານການທູດປະຊາຊົນ, ເປັນແນວໂຮມທີ່ກວ້າງໃຫຍ່ຕ່າງໜ້າໃຫ້ແກ່ຜົນປະໂຫຍດ ຂອງທຸກໆຊັ້ນຄົນ, ຊົນຊາດຊົນເຜົ່າ ແລະ ຊາວຜູ້ອອກແຮງງານທົ່ວປະເທດ, ປຸກລະດົມຄວາມສາມັກຄີຂອງຄົນພາຍໃນຊາດ ໃຫ້ເປັນປຶກແຜ່ນ, ຈົນສາມາດສູ້ຊົນໃຫ້ບັນດາພັກການເມືອງຕ່າງໆ ຮ່ວມລົງນາມໃນສັນຍາວຽງຈັນ ເພື່ອຄວາມປອງດອງຊາດ ປີ 1957. ພາຍໃຕ້ການນຳພາຂອງພັກ, ແນວລາວຮັກຊາດ ຈຶ່ງໄດ້ສູ້ຊົນຊຸກຍູ້ ຄວາມປອງດອງຊາດໃນເວທີສາກົນ,ໂດຍສະເພາະ ການສູ້ຊົນໃນການອອກຖະແຫຼງການຮ່ວມວ່າດ້ວຍ ຄວາມປອງດອງຊາດ ແລະ ສ້າງຕັ້ງລັດຖະບານປະສົມແຫ່ງຊາດ ໃນວັນທີ 22 ມິຖຸນາ 1961 ທີ່ເມືອງ ຊູຣິກ ປະເທດສະວິດ; ການລົງນາມສັນຍາເຊີແນວ ປີ 1962 ວ່າດ້ວຍການສ້າງຕັ້ງລັດຖະບານປະສົມ ແລະ ຄວາມເປັນກາງຂອງລາວ.

ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ ໄດ້ວາງນະໂຍບາຍການຕ່າງປະເທດຄື: ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະ ວັດທະນະຖາວອນ ແລະ ຕັ້ງໜ້າປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອສັນຕິພາບ ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມຢູ່ອິນດູຈີນ, ອາຊີ ອາຄະເນ ແລະ ໃນໂລກ, ໂດຍແມ່ນ ທ່ານ ພູມີ ວົງວິຈິດ ເປັນຜູ້ນຳພາວຽກງານການຕ່າງປະເທດ (ເອີ້ນວ່າ ຫ້ອງການພົວພັນການຕ່າງປະເທດ).

3. ແນວທາງການຕ່າງປະເທດຂອງລາວໃນໄລຍະໃໝ່.

ແຕ່ປີ 1975-1982: ພາຍຫຼັງການສະຖາປະນາ ສປປ ລາວ, ລັດຖະບານເຮົາ ໄດ້ວາງນະໂຍບາຍ ຕ່າງປະເທດ ຄື: **ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ບໍ່ຮ່ວມກຸ່ມ** ເຊິ່ງນະໂຍບາຍດັ່ງກ່າວແມ່ນ ສອດຄ່ອງກັບສະພາບການຕົວຈິງໃນໄລຍະນັ້ນ, ສປປ ລາວ ໄດ້ສະແດງໃຫ້ຊາວໂລກເຫັນເຖິງຄວາມ ເປັນເອກະລາດແຫ່ງຊາດຂອງຕົນຢ່າງສົມບູນ ເພື່ອພົວພັນກັບປະເທດຕ່າງໆ ທີ່ຮັກຫອມສັນຕິພາບ ພ້ອມທັງສ້າງເງື່ອນໄຂອັນດີໃຫ້ແກ່ການສ້າງສາພັດທະນາ ແລະ ເສີມສ້າງສາຍພົວພັນມິດຕະພາບກັບ ທຸກປະເທດ ໂດຍບໍ່ຈຳແນກລະບອບການເມືອງ-ສັງຄົມ. ການທີ່ພັກເຮົາກຳນົດນະໂຍບາຍບໍ່ຮ່ວມກຸ່ມ ນັ້ນ ມັນສະແດງໃຫ້ເຫັນທາງດ້ານຍຸດທະສາດ ກົນຍຸດໂທບາຍຂອງ ສປປ ລາວ ເພື່ອແໃສ່ຮັກສາສາຍ ພົວພັນສາມັກຄີກັບຂະບວນການບໍ່ຮ່ວມກຸ່ມ ເຊິ່ງເປັນກຸ່ມປະເທດທີ່ກ້າວໜ້າໃນໂລກ, ມີເປົ້າໝາຍ ຕ້ານຈັກກະພັດ ແລະ ລັດທິລ່າເມືອງຂຶ້ນ. ພ້ອມນັ້ນ, ພວກເຮົາ ໄດ້ໃຫ້ຄວາມສຳຄັນຕໍ່ຄວາມສາມັກຄີ ແລະ ຮ່ວມມືຮອບດ້ານກັບສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອື່ນໆ ໃນວົງຄະນະ ຍາດສັງຄົມນິຍົມອ້າຍນ້ອງ.

ແຕ່ປີ 1982-1986: ສະພາບການພົວພັນສາກົນແບບສອງຂົ້ວໃນໄລຍະສົງຄາມເຢັນ ໄດ້ສ້າງ ຄວາມກົດດັນທາງການເມືອງ, ບີບບັງຄັບໃຫ້ບັນດາປະເທດນ້ອຍຕ້ອງເລືອກຂ້າງ, ບໍ່ອະນຸຍາດໃຫ້ ສປປ

ລາວ ເຮົາສືບຕໍ່ແນວທາງ "ບໍ່ຮ່ວມກຸ່ມ" ອີກຕໍ່ໄປ ສະນັ້ນ, ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ (ເມສາ 1982) ຈຶ່ງໄດ້ວາງແນວທາງການຕ່າງປະເທດ: **ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ສັງຄົມນິຍົມ, ເພີ່ມທະວີຢ່າງບໍ່ຢຸດຢັ້ງຄວາມສາມັກຄີພິເສດ, ການຮ່ວມມືສໍາພັນສູ້ຮົບ ແລະ ການຮ່ວມມືຮອບດ້ານກັບ ສະຫະພາບໂຊວຽດ ແລະ ບັດດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ.**

ປີ 1986 ໄລຍະການປ່ຽນແປງໃໝ່: ສະພາບການຂອງໂລກໃນໄລຍະດັ່ງກ່າວ ມີການປ່ຽນແປງ ຢ່າງໃຫຍ່ຫຼວງ ແລະ ເລິກເຊິ່ງກວ່າເກົ່າ ຖ້າທຽບກັບເຫດການຕ່າງໆ ທີ່ເກີດຂຶ້ນໃນເມື່ອກ່ອນ. ໃນປີ 1985 ສະຫະພາບໂຊວຽດ ໄດ້ດໍາເນີນການປະຕິຮູບທາງດ້ານເສດຖະກິດ, ຊຸກຍູ້ໃຫ້ບັນດາປະເທດ ສັງຄົມນິຍົມເພິ່ງຕົນເອງ ແລະ ກຸ້ມຕົນເອງ. ຂະນະດຽວກັນ, ສະພາບຄວາມເຄັ່ງຕຶງໃນຊ່ວງໄລຍະ ສົງຄາມເຢັນ ກໍໄດ້ຫຼຸດລົງ ແລະ ໄດ້ສ້າງເງື່ອນໄຂ ແລະ ໂອກາດອັນໃໝ່ໃຫ້ບັນດາປະເທດໃນໂລກ ມີ ການຮ່ວມມືກັນຫຼາຍຂຶ້ນ.

ສະນັ້ນ, ໃນກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ (ພະຈິກ 1986) ໄດ້ວາງແນວທາງການ ປ່ຽນແປງ ໃໝ່ຢ່າງຮອບດ້ານ ໂດຍອີງໃສ່ 6 ຫຼັກການຄື:

ໜຶ່ງ: ຍຶດໝັ້ນຈຸດໝາຍສັງຄົມນິຍົມ.

ສອງ: ຍຶດໝັ້ນລັດທິມາກ-ເລນິນ ແລະ ໝູນໃຊ້ຢ່າງປະດິດສ້າງ, ສອດຄ່ອງກັບຈຸດພິເສດຂອງ ປະເທດເຮົາ.

ສາມ: ຍຶດໝັ້ນໃນການນໍາພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ ພັກ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ;

ສີ່: ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ສ້າງກໍາລັງ ສາມັກ ຄີທົ່ວປວງຊົນ ແລະ ຄວາມເປັນປຶກແຜ່ນຂອງຊາດລາວເອກະພາບ;

ຫ້າ: ເພີ່ມທະວີຄວາມສັກສິດຂອງລະບົບອໍານາດປະຊາທິປະໄຕປະຊາຊົນ, ອີງໃສ່ກໍາລັງແຮງ ຂອງປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປະກິດການອາດຍາສິດທຸກຮູບແບບ.

ຫົກ: ເຊີດຊູຈິດໃຈເອກະລາດ ເປັນເຈົ້າຕົນເອງ ສົມທົບກໍາລັງແຮງຍຸກສະໄໝ.

ຕໍ່ກັບ 6 ຫຼັກການດັ່ງກ່າວ, ພັກຈຶ່ງໄດ້ຍົກສູງບັນຫາການກໍ່ສ້າງເສດຖະກິດແຫ່ງຊາດ ເປັນຈຸດ ໝາຍອັນດັບໜຶ່ງ ເຊິ່ງ ສປປ ລາວ ໄດ້ຕັ້ງໜ້າຊຸກຍູ້ວຽກງານຫັນສູ່ອຸດສາຫະກໍາ ແລະ ທັນສະໄໝ ໃຫ້ ຕິດພັນກັບວຽກງານການຕ່າງປະເທດ ໂດຍໄດ້ກໍານົດນະໂຍບາຍການຕ່າງປະເທດ: **ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ** ບົນພື້ນຖານຫຼັກການເຄົາລົບ ເອກະລາດ, ອະທິປະໄຕຂອງກັນ ແລະ ກັນ ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ. ນອກຈາກນັ້ນ ກໍໄດ້ກໍານົດນະໂຍບາຍໃນການພົວພັນແບບ ຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ, ເປີດກວ້າງເປັນແຕ່ລະບາດກ້າວ.

ກອງປະຊຸມໃຫຍ່ ຄັ້ງທີ XII ພັກເຮົາຍັງສືບຕໍ່ຢຶດໝັ້ນແນວ ທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ຕາມທິດນຳຖືການທູດປ້ອງກັນ ເຫດ, ການທູດເສດຖະກິດ ແລະ ສືບຕໍ່ດຳເນີນການພົວພັນຮ່ວມມືແບບຫຼາຍທິດ ຫຼາຍຝ່າຍ, ຫຼາຍ ຮູບແບບ ແລະ ຫຼາຍລະດັບ ລະຫວ່າງລັດ ກັບ ລັດ, ລະຫວ່າງພັກເຮົາ ກັບ ພັກການເມືອງຂອງ ປະເທດຕ່າງໆ ແລະ ວຽກງານການທູດປະຊາຊົນ ບົນພື້ນຖານການເຄົາລົບເອກະລາດ, ອຳນາດ ອະທິປະໄຕເຊິ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.

ສືບຕໍ່ຜັນຂະຫຍາຍແນວຄິດຊີ້ນຳ ແລະ ພຶດຕິກຳຕົວຈິງ ຂອງພັກເຮົາ ໃນການເຄື່ອນໄຫວ ວຽກງານຕ່າງປະເທດ ເພື່ອສ້າງສະພາບແວດລ້ອມສາກົນ ທີ່ເອື້ອອຳນວຍໃຫ້ແກ່ການປະຕິບັດສອງ ໜ້າທີ່ຍຸດທະສາດ ໂດຍຖືເອົາການສ້າງຄວາມເຂັ້ມແຂງ, ຄວາມເປັນເຈົ້າຕົນເອງ ສົມທົບການຍາດ ແຍ່ງກຳລັງແຮງຂອງຍຸກສະໄໝ ໃຫ້ກາຍເປັນກຳລັງແຮງສັງລວມເຂົ້າໃນການພັດທະນາ ແລະ ຍົກ ລະດັບຂີດຄວາມສາມາດແຂ່ງຂັນ ແລະ ການເຊື່ອມໂຍງກັບສາກົນ ຢ່າງເປັນເຈົ້າການ ໂດຍເລີ່ມ ຈາກຜົນປະໂຫຍດແຫ່ງຊາດຕິດພັນກັບຜົນປະໂຫຍດລວມ ຂອງພາກພື້ນ, ສາກົນ ແລະ ທ່າອ່ຽງ ຂອງຍຸກສະໄໝ.

ຕັ້ງໜ້າປະຕິບັດພັນທະສາກົນ, ບັນດາສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ. ສືບຕໍ່ເສີມຂະຫຍາຍສາຍພົວພັນມິດພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການ ຮ່ວມມືຮອບດ້ານ, ການເປັນຮຸ້ນສ່ວນຍຸດທະສາດ ກັບ ສສ ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ ໂດຍ ສະເພາະ ສືບຕໍ່ສົ່ງເສີມໃຫ້ການພົວພັນຮ່ວມມືດ້ານເສດຖະກິດ-ການຄ້າ ມີການຂະຫຍາຍ ຕົວຢ່າງຕັ້ງໜ້າຕາມທິດເຊື່ອມໂຍງ-ເຊື່ອມຈອດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນສູງ; ສືບຕໍ່ ເສີມຂະຫຍາຍສາຍພົວພັນ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ, ໝັ້ນຄົງ, ຍາວນານຕາມທິດ 4 ດີ ກັບ ສປ ຈີນ ຕິດພັນກັບການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍຄູ່ຮ່ວມຊະຕາກຳ ລາວ-ຈີນ ໃຫ້ ມີມາດຕະຖານສູງ, ລະດັບສູງ ແລະ ຄຸນນະພາບສູງ; ສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍ ພົວພັນມິດຕະພາບ ທີ່ເປັນມູນເຊື້ອກັບລາຊະອານາຈັກກຳປູເຈຍ ໃນຖະນະທີ່ເປັນປະເທດໄກ້ຄຽງ ທີ່ເປັນຄູ່ຮ່ວມຍຸດທະສາດໝັ້ນຄົງຍາວນານ; ສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນ ທີ່ ເປັນມູນເຊື້ອອັນດີງາມ ກັບບັນດາປະເທດສັງຄົມນິຍົມ, ໃຫ້ຄວາມສຳຄັນຕໍ່ຄວາມສຳພັນໃກ້ຊິດ, ສ້າງຄວາມໄວ້ເນື້ອເຊື່ອໃຈ ກັບປະເທດບ້ານໃກ້ເຮືອນຄຽງ ແລະ ປະເທດເພື່ອນມິດອື່ນໆ ຢ່າງສະ ເ ໝີຕົ້ນສະເໝີປາຍ; ສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍຄວາມສຳພັນທີ່ເປັນມູນເຊື້ອ ແລະ ຄູ່ ຮ່ວມຍຸດທະສາດ ເພື່ອຄວາມໝັ້ນຄົງໃນອາຊີ-ປາຊີຟິກ ກັບສະຫະພັນລັດເຊຍ; ສືບຕໍ່ຍຶດໝັ້ນ ແລະ ສະໜັບສະໜູນການຮ່ວມມືຫຼາຍຝ່າຍ, ເຄົາລົບກົດບັດສະຫະປະຊາຊາດ ແລະ ສະໜັບສະ ໜູນການແກ້ໄຂຂໍ້ຂັດແຍ່ງ ໂດຍສັນຕິວິທີ, ລວມທັງການເຄື່ອນໄຫວຢ່າງຕັ້ງໜ້າ ໃນຂອບອາຊຽນ ແລະ ຂອບການຮ່ວມມືອະນຸພາກພື້ນຕ່າງໆ.

II. ຜົນສຳເລັດໃນການເປີດກວ້າງການພົວພັນສາກົນຂອງ ສປປ ລາວ.

ປະຕິບັດຕາມແນວທາງຕ່າງປະເທດ, ສປປ ລາວ ໄດ້ມີການເປີດກວ້າງການພົວພັນກັບບັນດາ ປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ດັ່ງນີ້:

ໃນວັນທີ 23 ກໍລະກົດ 1997, ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງສະມາຄົມພາກພື້ນ ອາຊີຕາເວັນອອກສ່ຽງໃຕ້ ຫຼື ອາຊຽນ ເຊິ່ງຮັບຮອງເອົາຢູ່ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 2 ທີ່ ປະເທດມາເລເຊຍ. ການເຂົ້າຮ່ວມວົງຄະນາຍາດອາຊຽນ ແມ່ນການເພີ່ມທະວີການຈັດຕັ້ງປະຕິບັດນະ ໂຍບາຍການຕ່າງປະເທດຂອງ ສປປ ລາວ ແນໃສ່ປະກອບສ່ວນເຂົ້າໃນການສ້າງສັນຕິພາບ, ສະຖຽນລະ ພາບ ແລະ ການຮ່ວມມື ເພື່ອການພັດທະນາພາຍໃນພາກພື້ນ.

ວັນທີ 29-30 ພະຈິກ 2004, ສປປ ລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 ທີ່ນະຄອນຫຼວງວຽງຈັນ **ພາຍໃຕ້ຫົວຂໍ້: ການເສີມສ້າງຄວາມໝັ້ນຄົງ ແລະ ການຂະ ຫຍາຍ ຕົວຂອງອາຊຽນຜ່ານຄວາມເປັນເອກະພາບ, ການເຊື່ອມໂຍງທາງດ້ານເສດຖະກິດ ແລະ ຄວາມກ້າວໜ້າ ທີ່ສັງຄົມ.**

ໃນປີ 2009, ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດການແຂ່ງຂັນກິລາຊີເກມ ຄັ້ງທີ 25 ໄດ້ມີຜົນສຳເລັດຢ່າງຈົບງາມ ເຊິ່ງເປັນປະຫວັດສາດທີ່ສຳຄັນຂອງຊາດລາວເຮົາ ທີ່ໄດ້ເປັນເຈົ້າພາບ ແລະ ຈັດງານກິລາໃນລະດັບພາກພື້ນ ເຊິ່ງເປັນການດຶງດູດນັກທ່ອງທ່ຽວ ແລະ ໂຄສະນາສີລະປະ-ວັດທະນະທຳຂອງຄວາມເປັນລາວ ໃຫ້ສາກົນໄດ້ຮັບຮູ້ຢ່າງກວ້າງຂຶ້ນຕື່ມ.

ກອງປະຊຸມລັດພາຄີ ຂອງສົນທິສັນຍາ ວ່າດ້ວຍລະເບີດລູກຫວ່ານຄັ້ງປະຖົມມະເລີກ ໄດ້ ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ, ວັນທີ 9-12 ພະຈິກ 2010 ໂດຍເຊື້ອເຊີນເອົາຄະນະຜູ້ແທນຈາກ 40 ປະເທດສະມາຊິກ, 47 ປະເທດພາຄີ ແລະ 34 ປະເທດສັງເກດການ, 20 ອົງການຈັດຕັ້ງສາກົນ ເຂົ້າ ຮ່ວມທັງໝົດ 1.200 ຄົນ; ພາຍໃຕ້ການເປັນປະທານຮ່ວມ ລະຫວ່າງ ທ່ານ ທອງລຸນ ສີສຸລິດ, ຮອງ ນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໃນເວລານັ້ນ ແລະ ທ່ານ ທູດ ຈາກ ປະເທດອຽກລັງ.

ວັນທີ 5-6 ພະຈິກ 2012, ສປປ ລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາເຊມ 9 ທີ່ນະຄອນຫຼວງວຽງຈັນ ແລະ ມີຜູ້ນຳຂອງສອງພາກພື້ນອາຊີ ແລະ ເອີຣົບທັງໝົດ 51 ຄະນະເຂົ້າ ຮ່ວມ. ໃນກອງປະຊຸມດັ່ງກ່າວ ໄດ້ຮັບຮອງເອົາ 2 ເອກະສານສຳຄັນ ຄື: ຖະແຫຼງການວຽງຈັນ ວ່າ ດ້ວຍການຮັດແໜ້ນການເປັນຄູ່ຮ່ວມມື ເພື່ອສັນຕິພາບ ແລະ ການພັດທະນາ ແລະ ປົດຖະແຫຼງຂອງ ປະທານກອງປະຊຸມສຸດຍອດອາເຊມ ຄັ້ງທີ 9 ; ຮັບຮອງເອົາສະມາຊິກໃໝ່ອີກ 3 ປະເທດ ຄື: ບັງ ກະລາເທດ, ນ໋ອກແອ ແລະ ສະວິດ ເຊິ່ງລວມກັນແລ້ວສະມາຊິກຂອງອາເຊມ ມີທັງໝົດ 48 ປະເທດ ແລະ 3 ອົງການຈັດຕັ້ງລະຫວ່າງປະເທດ. ນອກຈາກນີ້, ຍັງມີກອງປະຊຸມປິ່ນອ້ອມ 3 ກອງ ປະຊຸມ ເຊັ່ນ: ກອງປະຊຸມລັດຖະສະພາອາຊີ-ເອີຣົບ ຄັ້ງທີ 7 (ວັນທີ 3-4 ຕຸລາ 2012), ກອງປະຊຸມ

ພາກປະຊາຊົນອາຊີ-ເອີຣົບ ຄັ້ງທີ 9 (ວັນທີ 16-19 ຕຸລາ 2012) ແລະ ກອງປະຊຸມພາກທຸລະກິດອາຊີ-ເອີຣົບ ຄັ້ງທີ 13 (ວັນທີ 3-4 ພະຈິກ 2012).

ໃນວັນທີ 2 ກຸມພາ 2013 ສປປ ລາວ ໄດ້ຖືກຢັ້ງຢືນເປັນສະມາຊິກຂອງອົງການການຄ້າໂລກ ປະເທດທີ 158 ຢ່າງເປັນທາງການ.

ວັນທີ 6-8 ກັນຍາ 2016, ສປປ ລາວ ໄດ້ເປັນເຈົ້າພາບ ແລະ ເປັນປະທານຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ແລະ 29, ແລະ ກອງປະຊຸມປຶ່ນອ້ອມອື່ນໆກວ່າ 200 ກອງປະຊຸມ. ສຳລັບກອງປະຊຸມສຸດຍອດໃນຄັ້ງນີ້ ແມ່ນພາຍໃຕ້ຫົວຂໍ້: **"ຫັນວິໄສທັດໃຫ້ເປັນຮູບປະທຳ ເພື່ອຄວາມເຂັ້ມແຂງຂອງປະເທດອາຊຽນ"** ໂດຍການເຂົ້າຮ່ວມ ຂອງປະມຸກລັດ, ຫົວໜ້າລັດຖະບານ, ບັນດາ
ລັດຖະມົນຕີ ແລະ ຄະນະຜູ້ແທນຈາກປະເທດອາຊຽນ ແລະ ຄູ່ຮ່ວມມືເຂົ້າຮ່ວມຢ່າງພ້ອມພຽງ.

ນອກຈາກນີ້, ສປປ ລາວ ກໍ່ໄດ້ມີຜົນສຳເລັດໃນວຽກງານປັກຫຼັກໝາຍຖີ່ ແລະ ບູລະນະລະບົບຫຼັກໝາຍຊາຍແດນກັບ ສສ ຫວຽດນາມ, ສປ ຈີນ ແລະ ສສ ມຽນມາ, ສືບຕໍ່ສຳຫຼວດປັກຫຼັກໝາຍຊາຍແດນທີ່ຍັງຄ້າງຈຳນວນໜຶ່ງກັບຣາຊະອານາຈັກໄທ ແລະ ຣາຊະອານາຈັກກຳປູເຈຍ.

ວັນທີ 9-11 ຕຸລາ 2024 ສປປ ລາວ ໄດ້ເປັນເປັນເຈົ້າພາບ ແລະ ປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44-45 ແລະ ບັນດາກອງປະຊຸມສຸດຍອດອື່ນໆ ທີ່ກ່ຽວຂ້ອງ ພາຍໃຕ້ຫົວຂໍ້ **ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງ**

ນອກນັ້ນ, ພັກເຮົາ ໄດ້ປະຕິບັດການເຊື່ອມໂຍງເຂົ້າກັບສາກົນຢ່າງຕັ້ງໜ້າ ແລະ ເປັນເຈົ້າການໃນການເຄື່ອນ ໄຫວວຽກງານຫຼາຍຝ່າຍ ທັງໃນເວທີພາກພື້ນ ແລະ ສາກົນ ເຊັ່ນ: ຂອບຂອງອົງການສະຫະປະຊາຊາດ ແລະ ອົງການເຄືອຂ່າຍ, ອາຊຽນ, ກຸ່ມປະເທດກຳລັງພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລ, ຂະບວນການບໍ່ຮ່ວມກຸ່ມ, ກຸ່ມປະເທດ G77, ກຸ່ມປະເທດດ້ອຍພັດທະນາ, ອົງການບັນດາປະເທດທີ່ນຳໃຊ້ພາສາຝຣັ່ງ OIF, ຂອບການຮ່ວມມືແມ່ນ້ຳຂອງ ແລະ ຂອບການຮ່ວມມືອື່ນໆ ເຊິ່ງຮອດປັດຈຸບັນ ສປປ ລາວ ໄດ້ເຂົ້າເປັນສະມາຊິກອົງການຈັດຕັ້ງສາກົນຫຼາຍກວ່າ 238 ອົງການ.

ປັດຈຸບັນ, ສປປ ລາວ ມີສາຍພົວພັນການທູດກັບ 151 ປະເທດ, ມີສຳນັກງານຜູ້ຕາງໜ້າການທູດ ຂອງ ສປປ ລາວ ຢູ່ຕ່າງປະເທດ 41 ແຫ່ງ, ໃນນັ້ນ ມີສະຖານເອກອັກຄະລັດຖະທູດ 27 ແຫ່ງ, ສະຖານເອກອັກຄະລັດຖະທູດ ທັງເປັນສຳນັກງານຜູ້ຕາງໜ້າຖາວອນ 01 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 2 ແຫ່ງ, ສະຖານກົງສູນໃຫຍ່ 11 ແຫ່ງ, ຫ້ອງການກົງສູນ 1 ແຫ່ງ, ກົງສູນກິຕິມະສັກຂອງລາວທີ່ຢູ່ຕ່າງປະເທດ 24 ແຫ່ງ ໃນ 18 ປະເທດ, ກົງສູນກິຕິມະສັກຂອງຕ່າງປະເທດຢູ່ ສປປ ລາວ 20 ແຫ່ງ, ດ່ານສາກົນຂອງລາວໃນຂອບເຂດທົ່ວປະເທດມີຈຳນວນ 32 ດ່ານ.

ການພົວພັນກັບພັກການເມືອງຫຼາຍກວ່າ 146 ພັກການເມືອງໃນ 82 ປະເທດ, ໃນນີ້ໄດ້ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການພົວພັນດ້ານພັກ ແລະ ລັດ, ສ້າງຄວາມເຂົ້າອົກເຂົ້າໃຈ, ຄວາມ

ຮັກແພງ, ໄວ້ເນື້ອເຊື່ອໃຈ ແລະ ຊຸກຍູ້ສິ່ງເສີມລະຫວ່າງ ປະຊາຊົນລາວ ກັບ ປະຊາຊົນຕ່າງປະເທດ ໃຫ້ມີການໄປມາຫາສູ່, ທ່ອງທ່ຽວຢ້ຽມຢາມ ແລະ ພົບປະແລກປ່ຽນ, ສ້າງກິດຈະກຳ, ຊື້-ຂາຍກັນຢ່າງ ເປັນປະຈຳ. ມາຮອດປັດຈຸບັນ ໄດ້ສ້າງຕັ້ງ 01 ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ສະມາຄົມມິດຕະພາບຂອງລາວກັບຕ່າງປະເທດ ທັງໝົດ 20 ສະມາຄົມ. ບັນດາແຂວງທ້ອງຖິ່ນ ຕ່າງໆຂອງ ສປປ ລາວ ຍັງມີການເຊັນສັນຍາເປັນແຂວງແຮກສ່ຽວກັບບັນດາທ້ອງຖິ່ນຂອງ ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫຼີ, ລັດເຊຍ, ຮົງກາລີ, ກຳປູເຈຍ, ຍີ່ປຸ່ນ, ສ.ເກົາຫລີ ແລະ ອື່ນໆ.

ສັງລວມແລ້ວ ການປະຕິບັດນະໂນບາຍແນວທາງການຕ່າງປະເທດຂອງ ສປປ ລາວ ສັນຕິພາບເອກະລາດ, ມິດຕະພາບ ແລະ ການຮ່ວມມື ສະເໝີຕົ້ນສະເໝີປາຍ ແລະ ປະຕິບັດ ນະໂຍບາຍເປີດກວ້າງການພົວພັນຮ່ວມມືແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ຕາມ ທິດນຳ "ເພີ່ມມິດຫຼຸດຜ່ອນສັດຕູ" ແລະ “ການຫຼຸດປ້ອງກັນເຫດ ເພື່ອປົກປັກຮັກສາ ແລະ ພັດທະນາປະເທດຊາດ” ໄດ້ເຮັດໃຫ້ ສປປ ລາວ ມີການພົວພັນຮ່ວມມື ທີ່ເປັນມູນເຊື້ອອັນດີຢ່າງ ເລີກເຊິ່ງ ແລະ ແໜ້ນແຟ້ນກວ່າເກົ່າ ກັບບັນດາປະເທດເພື່ອນມິດຍຸດທະສາດ, ມີການພົວພັນ ມິດຕະພາບ ແລະ ການຮ່ວມມືທີ່ດີ ມີໝາກຜົນຕົວຈິງກັບປະເທດເພື່ອນມິດຕ່າງໆ ໃນທົ່ວໂລກ, ປະເທດເຮົານັບມື້ນັບຖືກຮັບຮູ້ຫຼາຍຂຶ້ນ ແລະ ໄດ້ຮັບຄວາມເຊື່ອຖືຫຼາຍຂຶ້ນ ໃນວົງຄະນາຍາດ ສາກົນ, ຖານະບົດບາດ ແລະ ການປະກອບສ່ວນຂອງປະເທດເຮົາຢູ່ໃນວຽກງານຂອງສາກົນ ກໍ່ນັບ ມື້ນັບກວ້າງຂວາງອອກ, ການສະໜັບສະໜູນ ແລະ ການຊ່ວຍເຫຼືອໃນການພັດທະນາ, ການ ລົງທຶນຂອງຕ່າງປະເທດກໍ່ນັບມື້ນັບເພີ່ມທະວີ ແລະ ຈຳນວນນັກທ່ອງທ່ຽວເຂົ້າປະເທດເຮົາກໍເພີ່ມ ຫຼາຍຂຶ້ນເປັນກ້າວໆ ທີ່ສຳຄັນກໍຄືການຍົກສູງຖານະບົດບາດຂອງ ສປປ ລາວ ໃຫ້ສູງເດັ່ນຂຶ້ນທັງໃນ ເວທີພາກພື້ນ ແລະ ສາກົນ.

III. ບາງຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການເຄື່ອນໄຫວວຽກງານການ ຕ່າງປະເທດ ຂອງສປປລາວ.

ຜ່ານການເຄື່ອນໄຫວວຽກງານຕ່າງປະເທດ ຢ່າງເປັນເຈົ້າການ ແລະ ມີຫຼັກການຂອງພັກ ເຮັດ ໃຫ້ຖານະບົດບາດຂອງປະເທດເຮົາ ພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

- ການພົວພັນກັບບັນດາປະເທດເພື່ອນມິດຍຸດທະສາດ ກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບ ປະທຳກວ່າເກົ່າ.

- ການພົວພັນກັບປະເທດມະຫາອຳນາດມີຄວາມໝັ້ນທ່ຽງ ແລະ ໄດ້ເປີດກວ້າງການພົວພັນ ປະເທດເພື່ອນມິດອື່ນໆ ຢ່າງມີຈຸດສຸມ.

- ພວກເຮົາມີຄວາມເປັນເຈົ້າການໃນການຕອບໂຕ້ຖ້ອຍທຳນອງໃສ່ຮ້າຍປ້າຍສີ ຂອງອົດທິ ກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ, ສາມາດຊີ້ແຈງອະທິບາຍ, ຍາດແຍ່ງຄວາມເຫັນໃຈ ແລະ ການ

ສະໜັບສະໜູນຂອງເພື່ອນມິດສາກົນນັບມື້ນັບຫຼາຍຂຶ້ນ, ສາມາດທັບມ້າງກົນອຸບາຍມ້າງເພທຳລາຍ ຂອງພວກບໍ່ຫວັງດີຕໍ່ລະບອບໃໝ່ຂອງພວກເຮົາຢ່າງມີປະສິດທິຜົນ.

- ມີຄວາມໜັກແໜ້ນ ແລະ ຄ່ອງແຄ້ວໃນການປົກປັກຮັກສາອະທິປະໄຕ, ເຂດນ້ຳແດນດິນ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ.

- ເປັນເຈົ້າການ ແລະ ຮັກສາບົດບາດອັນພົ້ນເດັ່ນຢ່າງຕັ້ງໜ້າ ຂອງ ສປປ ລາວ ຢູ່ເວທີ ອາຊຽນ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງພາກພື້ນ ແລະ ສາກົນອື່ນໆ ສາມາດສ້າງ ໄດ້ສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການພັດທະນາປະເທດຊາດ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ກໍຄືການສ້າງຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈກັນ ແລະ ຮ່ວມມືກັນແບບຕ່າງຝ່າຍ ຕ່າງມີຜົນປະໂຫຍດ.

- ມີຜົນສຳເລັດໃນການຂົນຂວາຍຄົນເຊື້ອຊາດລາວຢູ່ຕ່າງປະເທດ ທັງຕີຖອຍການເຄື່ອນ ໄຫວປໍລະປັກຕໍ່ ສປປ ລາວ ຂອງກຸ່ມຄົນບໍ່ດີ.

- ການເຄື່ອນໄຫວຕ່າງປະເທດ ໄດ້ມີການຕິດແໜ້ນກັບການຍາດແຍ່ງການຊ່ວຍເຫຼືອ ເພື່ອການ ພັດທະນາ ແລະ ການຮ່ວມມື ດ້ານເສດຖະກິດ, ການເຊື່ອມໂຍງເສດຖະກິດສາກົນ ແລະ ການຕິດຈອດ ພາກພື້ນ; ສືບຕໍ່ມີບາດກ້າວທີ່ໜັກແໜ້ນ ແລະ ມີຜົນສຳເລັດທີ່ເປັນຮູບປະທຳຢ່າງຈະແຈ້ງ.

➢ ຢ່າງໃດກໍຕາມ ການເຄື່ອນໄຫວວຽກງານກໍຍັງບາງມີບາງຂໍ້ຄົງຄ້າງທີ່ຕ້ອງໄດ້ສຸມໃສ່ປັບປຸງ ຄື:

- ການຈັດຕັ້ງຜັນຂະຫຍາຍຜົນການເຄື່ອນໄຫວວຽກງານການຕ່າງປະເທດ ຂອງການນຳຂັ້ນ ສູງ, ບັນດາຂໍ້ຕົກລົງສັນຍາ ແລະ ສົນທິສັນຍາກັບຕ່າງປະເທດ ຍັງຊັກຊ້າ, ຂາດການປະສານງານ ລວມສູນ ແລະ ບໍ່ທັນສາມາດປະຕິບັດຕາມລະບຽບຫຼັກການໄດ້ດີເທົ່າທີ່ຄວນ, ການຕິດຕາມ, ກວດກາ ແລະ ປະເມີນຜົນ, ຍັງບໍ່ທັນເປັນເຈົ້າການ ແລະ ບໍ່ທັນມີຈຸດສຸມເທົ່າທີ່ຄວນ.

- ການປະສານງານ ແລະ ການປະສານສົມລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນໂລ່ນ ລ່ຽນ ແລະ ຜ່ານລະບົບປະຕູດຽວເທົ່າທີ່ຄວນ, ເຮັດໃຫ້ການເຄື່ອນໄຫວວຽກງານຍັງບໍ່ມີປະສິດທິ ພາບສູງ, ໂດຍສະເພາະການເຄື່ອນໄຫວວຽກງານການທູດເສດຖະກິດ ທີ່ຍັງບໍ່ໄດ້ຜັນຂະຫຍາຍ ທ່າແຮງບົ່ມຊ້ອນໄດ້ຢ່າງກວ້າງຂວາງ.

- ຂາດກົນກອງ ແລະ ບຸກລະກອນ ຫຼື ຊ່ຽວຊານ ສະເພາະໃນການຄົ້ນຄວ້າສະພາບພາກພື້ນ ແລະ ສາກົນ ຢ່າງລະອຽດ-ເລິກເຊິ່ງ ເພື່ອວາງແຜນຍຸດທະສາດ ແລະ ນະໂຍບາຍການຕ່າງປະເທດ ແລະ ວຽກງານຄົ້ນຄວ້າອື່ນໆ ເຮັດໃຫ້ວຽກງານການຄົ້ນຄວ້າຂົງເຂດດັ່ງກ່າວມີລັກສະນະກະແຈກ ກະຈາຍ ແລະ ບໍ່ລວມສູນ.

- ຍັງຂາດການຫັນເປັນທັນສະໄໝ ຫຼື ການນຳໃຊ້ເຕັກໂນໂລຊີວິທະຍາສາດ ເຂົ້າໃນ ການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

ສະນັ້ນ, ໃນການເຄື່ອນໄຫວວຽກງານການຕ່າງປະເທດ ສາມາດສະຫຼຸບ ແລະ ຖອດຖອນ ບົດຮຽນໄດ້ ດັ່ງນີ້:

- ຕ້ອງຍົກສູງຄຸນນະພາບການສຶກສາອົບຮົມໃຫ້ຖັນແຖວສະມາຊິກພັກ-ພະນັກງານ ກຳ ແໜ້ນທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ແນວທາງການຕ່າງປະເທດຂອງ ພັກຢ່າງເປັນລະບົບ. ສ້າງຄວາມເຂັ້ມແຂງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມຫ້າວຫັນໃນການປະຕິບັດໜ້າທີ່ ແລະ ເສີມຂະຫຍາຍໜ່ວຍພັກປອດໃສ, ເຂັ້ມແຂງ, ແລະ ໜັກແໜ້ນ ໂດຍຖືຄຸນນະພາບເປັນກົກ.

- ການສ້າງຄວາມເຂັ້ມແຂງໃຫ້ແກ່ພັກ ແລະ ພະນັກງານ ໂດຍການຈັດຕັ້ງປະຕິບັດແຜນກຳ ນົດພະນັກງານນຳພາ-ຄຸ້ມຄອງຢ່າງມີປະສິດທິຜົນ, ເນັ້ນການສັບຊ້ອນ, ຈັດວາງ ແລະ ປະເມີນ ຜົນງານຢ່າງເຂັ້ມງວດ. ຖືບູລິມະສິດໃນການຈັດສັນງົບປະມານໃສ່ການກໍ່ສ້າງຄວາມອາດສາມາດ ສະເພາະດ້ານຂອງພະນັກ ງານ ແລະ ສ້າງກົນໄກການສືບທອດທີ່ຊັດເຈນເພື່ອຮັບປະກັນການປ່ຽນ ແທນທີ່ມີຄຸນນະພາບ.

- ເສີມຂະຫຍາຍຄວາມເປັນເຈົ້າການ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍການຕ່າງປະ ເທດ, ສ້າງຄວາມເຂັ້ມແຂງໃນການປະສານງານລະຫວ່າງກົງຈັກການຕ່າງໆ ເຊັ່ນ: ການທູດສາຍພັກ ແລະ ສາຍລັດ, ສະພາແຫ່ງຊາດ ແລະ ການທູດປະຊາຊົນ, ການທູດສອງຝ່າຍ ແລະ ຫຼາຍຝ່າຍ, ການທູດ ການເມືອງ, ເສດຖະກິດ ແລະ ວັດທະນະທຳ ເພື່ອປະກອບ ສ່ວນເຮັດສຳເລັດແຜນງານ ແລະ ໂຄງການ ຕ່າງໆທີ່ກະຊວງໄດ້ກຳນົດຂຶ້ນ.

- ເພີ່ມທະວີການປະສານງານທີ່ໂລ່ງລ່ຽນ ແລະ ຫຼັກການປະຕູດຽວ ລະຫວ່າງ ວຽກງານ ຕ່າງປະເທດ, ກະຊວງ, ຂະແໜງການພາຍໃນ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ມີການເຊື່ອມໂຍງ ລະຫວ່າງນະໂຍບາຍການຕ່າງປະເທດ ແລະ ຍຸດທະສາດການພັດທະນາແຫ່ງຊາດ ເພື່ອສ້າງຄວາມ ສອດຄ່ອງໃນການຈັດຕັ້ງປະຕິບັດ. ສ້າງກົນໄກການປະສານງານ ລະຫວ່າງ ສູນກາງ ແລະ ກົງຈັກອື່ນໆ ເພື່ອຮັບປະກັນການປະຕິບັດນະໂຍບາຍຢ່າງເປັນເອກະພາບ ແລະ ມີປະສິດທິຜົນ, ໂດຍສະເພາະ ການ ກວດກາຕິດຕາມການຈັດຕັ້ງຜັນຂະຫຍາຍຜົນການເຄື່ອນໄຫວວຽກງານການຕ່າງປະເທດຂອງການນຳ ຂັ້ນສູງ ໃຫ້ປະກົດຜົນເປັນຈິງ.

- ຊຸກຍູ້ການເຄື່ອນໄຫວວຽກງານການທູດເສດຖະກິດ ຕາມຄຳຂວັນ "**ບຸກທະລຸການທູດ ເສດຖະກິດ, ຫັນທິດເປັນທັນສະໄໝ, ວ່ອງໄວດ້ານເສນາທິການ**"

ທັງໝົດນັ້ນ ແມ່ນການປາຖະກະຖາ 2 ອັນປະຫວັດສາດສຳຄັນຂອງຊາດ, ຂອງພັກ ແລະ ຂອງເພື່ອນມິດສາກົນ ໃນເດືອນກັນຍາ 2026 ມາຮອດນີ້ກໍໝົດພຽງເທົ່ານີ້ ເພື່ອເຮັດໃຫ້ການ ໂຄສະນາ-ປາຖະກະຖາ 2 ອັນປະຫວັດສາດສຳຄັນ ດັ່ງກ່າວນີ້ ທົ່ວເຖິງທຸກເປົ້າໝາຍ ຂ້າພະເຈົ້າຂໍ ຮຽກຮ້ອງມາຍັງບັນດາສະຫາຍ ຫົວໜ້າພະແນກການ, ກົມກອງ, ລັດວິສະຫະກິດອ້ອມຂ້າງແຂວງ

ແລະ ບັນດາເມືອງ ຈົ່ງສືບຕໍ່ນຳເອົາເນື້ອໃນດັ່ງກ່າວນີ້ ໄປຈັດຕັ້ງປາຖະກະຖາຢູ່ຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໃຫ້ບັນລຸຕາມລະດັບຄາດໝາຍ ແລ້ວລາຍງານຕໍ່ຄະນະໂຄສະນາອົບຮົມແຂວງ

ທ້າຍນີ້, ອວຍພອນໃຫ້ບັນດາທ່ານ, ບັນດາສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ ເຮັດສຳເລັດໜ້າທີ່ທຸກປະການ, ຈົ່ງພ້ອມກັນຮັກສາ ແລະ ເສີມຂະຫາຍມູນເຊື້ອອັນດີງາມຂອງພັກ-ຂອງຊາດນີ້ໄວ້ ແລະ ພ້ອມກັນພັດທະນາແຂວງໄຊຍະບູລີ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

(ຂໍຂອບໃຈ)